ແຈ້ງການສະບັບນີ້ຈັດຫາໃຫ້ທ່ານພາຍໃຕ້ກົດໝາຍຣັຖຄາລິຟໍເນັຽ

ທ່ານໄດ້ຮັບການເບິ່ງແຍງສຸກເສີນທີ່ໂຮງໝໍແຫ່ງໜຶ່ງຊຶ່ງບໍ່ໄດ້ຢູ່ໃນເຄືອຂ່າຍຜູ້ໃຫ້ບໍລິການໃນແຜນສຸຂະພາບຂອງ ທ່ານ. ພາຍໃຕ້ກົດໝາຍຂອງຣັຖ, ແຜນສຸຂະພາບຂອງທ່ານຕ້ອງເປັນຜູ້ຈ່າຍຄ່າເບິ່ງແຍງແບບສຸກເສີນ ໂດຍບໍ່ ຄຳນຶງວ່າ ທ່ານຈະຮັບການເບິ່ງແຍງສຸກເສີນນັ້ນຈາກບ່ອນໃດກໍຕາມ. ທ່ານໝໍທີ່ເປັນຜູ້ເບິ່ງແຍງທ່ານນັ້ນໄດ້ ຕັດສິນໃຈວ່າໃຫ້ຍ້າຍທ່ານໄປໂຮງໝໍອື່ນຢ່າງປອດພັຍເພື່ອຮັບການເບິ່ງແຍງທີ່ຈຳເປັນເພີ່ມເຕີມ. ຍ້ອນວ່າ ທ່ານບໍ່ຈຳເປັນຕ້ອງໄດ້ຮັບການເບິ່ງແຍງແບບສຸກເສີນອີກຕໍ່ໄປແລ້ວ, ສະນັ້ນແຜນສຸຂະພາບຂອງທ່ານຈຶ່ງບໍ່ ອະນຸມັດໃຫ້ຮັບການເບິ່ງແຍງເພີ່ມເຕີມອີກທີ່ໂຮງໝໍແຫ່ງນີ້. ແຜນສຸຂະພາບຂອງທ່ານໄດ້ຈັດການເພື່ອໃຫ້ທ່ານ ຍ້າຍໄປໂຮງໝໍອື່ນທີ່ຢູ່ໃນເຄືອຂ່າຍຜູ້ໃຫ້ບໍລິການໃນແຜນສຸຂະພາບຂອງທ່ານ. ຖ້າວ່າ ທ່ານເຫັນດີນຳທີ່ຈະ ຍ້າຍໄປ ໂຮງໝໍນັ້ນ, ທາງແຜນສຸຂະພາບຂອງທ່ານຈະເປັນຜູ້ຈ່າຍຄ່າເບິ່ງແຍງຮັກສາທີ່ໂຮງໝໍນັ້ນໃຫ້ທ່ານ. ທ່ານຈະພຽງແຕ່ຕ້ອງຈ່າຍຄ່າງວດປະຈຳປີ, ຄ່າຈ່າຍຮ່ວມ, ຫຼືຄ່າປະກັນພັຍຮ່ວມສຳລັບການເບິ່ງແຍງຮັກສາ. ທ່ານຈະບໍ່ຕ້ອງຈ່າຍຄ່າງວດປະຈຳປີ, ຄ່າຈ່າຍຮ່ວມ, ຫຼືຄ່າປະກັນພັຍຮ່ວມສຳລັບຄ່າພາຫະນະເດີນທາງໄປ ໂຮງໝໍອື່ນຊຶ່ງຢູ່ພາຍໃຕ້ແຜນສຸຂະພາບຂອງທ່ານ.

**ຖ້າວ່າ ທ່ານເລືອກທີ່ຈະພັກຢູ່ໃນໂຮງໝໍແຫ່ງນີ້ເພື່ອຮັບການເບິ່ງແຍງຮັກສາເພີ່ມເຕີມ, ທ່ານຈະຕ້ອງຈ່າຍ ຄ່າຮັກສາເຕັມສ່ວນ ເນື່ອງຈາກວ່າ ດຽວນີ້ ທ່ານບໍ່ຈຳເປັນຕ້ອງໄດ້ຮັບການເບິ່ງແຍງແບບສຸກເສີນອີກຕໍ່ໄປແລ້ວ.**
ຄ່າໃຊ້ຈ່າຍນີ້ອາດລວມເຖິງຄ່າບໍລິການຂອງໝໍ ຫຼືແພດໝໍຕ່າງໆ, ໂຮງໝໍ, ແລະຫ້ອງທົດລອງ, ການສ່ອງລັງສີ, ຫຼືການບໍລິການອື່ນໆ ທີ່ທ່ານໄດ້ຮັບ. ຖ້າທ່ານຫາກບໍ່ຄິດວ່າ ທ່ານຈະຖືກຍ້າຍໄປຢ່າງປອດພັຍ, ຈົ່ງປຶກສາກັບ ທ່ານໝໍຂອງທ່ານກ່ຽວກັບຂໍ້ກັງວົນໃຈຂອງທ່ານ. ຖ້າວ່າ ທ່ານຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມ, ທ່ານສາມາດຕິດຕໍ່:

- ພະແນກບໍລິການສະມາຊິກຂອງແຜນສຸຂະພາບ. ຈົ່ງເບິ່ງທີ່ບັດສະມາຊິກແຜນສຸຂະພາບຂອງທ່ານ ເພື່ອເບິ່ງໝາຍເລກໂທຣ. ທ່ານສາມາດຮ້ອງທຸກກັບແຜນສຸຂະພາບຂອງທ່ານໄດ້.

- ສູນບໍລິການຊ່ວຍເຫຼືອຂອງພະແນກການຈັດການດູແລສຸຂະພາບ ທີ່ເລກໂທຣ 1-888-466-2219. ສູນບໍລິການຊ່ວຍເຫຼືອໃຫ້ບໍລິການທຸກມື້ ຕະຫຼອດ 24 ຊົ່ວໂມງ. ສູນຊ່ວຍເຫຼືອສາມາດເຮັດວຽກ ຮ່ວມກັບແຜນສຸຂະພາບຂອງທ່ານເພື່ອແກ້ໄຂບັນຫາຂໍ້ກັງວົນໃຈຂອງທ່ານ, ແຕ່ທ່ານຍັງອາດຕ້ອງ ຈ່າຍຄ່າເບິ່ງແຍງຮັກສາເຕັມສ່ວນທີ່ໂຮງໝໍແຫ່ງນີ້ ຖ້າວ່າ ທ່ານເລືອກທີ່ຈະຢູ່ໂຮງໝໍນີ້.

ຖ້າວ່າ ທ່ານມີແຜນສຸຂະພາບເມດິແຄ (Medicare), ທ່ານມີສິດທີ່ຈະຮ້ອງອຸທອນເພີ່ມເຕີມ. ຖ້າວ່າ ແຜນສຸຂະພາບເມດິແຄຂອງທ່ານຕັດສິນໃຈທີ່ຈະສົ່ງທ່ານໄປໂຮງໝໍອື່ນ, ທ່ານສາມາດຂໍຮ້ອງທາງແຜນສຸຂະພາບ ໃຫ້ເລັ່ງການອຸທອນການຕັດສິນ (ໃຫ້ໄວຂຶ້ນ). ແຜນສຸຂະພາບຂອງທ່ານຕ້ອງໃຫ້ຄຳຕັດສິນແກ່ທ່ານຢ່າງໄວວາ. ຖ້າວ່າ ທ່ານຕ້ອງການອຸທອນ, ຈົ່ງໂທຣ ຫຼື ສົ່ງແຟກຊ໌ໄປທີ່ແຜນສຸຂະພາບຂອງທ່ານ, ແລະຂໍຮ້ອງໃຫ້ມີການເລັ່ງ ການອຸທອນ. ທ່ານອາດໃຫ້ໃຜຜູ້ໜຶ່ງ, ເຊັ່ນ ຍາດພີ່ນ້ອງ ຫຼື ທ່ານໝໍ, ສົ່ງແຟກຊ໌ແທນທ່ານໄດ້. ທ່ານໝໍ ຫຼື ເພື່ອນ/ຍາດພີ່ນ້ອງສາມາດໂທຣ ຫຼື ສົ່ງແຟກຊ໌ ແທນທ່ານໄດ້ ຖ້າວ່າ ທ່ານໃຫ້ຄຳອະນຸຍາດເປັນລາຍລັກອັກສອນ – ຊຶ່ງເອີ້ນວ່າ ການອະນຸຍາດ. ຖ້າວ່າ ການອຸທອນຂອງທ່ານຖືກປະຕິເສດ, ທາງເມດິແຄຈະຈັດຫາຜູ້ກວດສອບ ຈາກພາຍນອກແຜນສຸຂະພາບຂອງທ່ານເພື່ອມາກວດສອບເລື້ອງຂອງທ່ານ. ຖ້າວ່າ ທ່ານບໍ່ເຫັນດີກັບການຕັດສິນ ຂອງຜູ້ກວດສອບ, ທ່ານຈະໄດ້ຮັບການແຈ້ງບອກກ່ຽວກັບສິດທິໃນການຂໍອຸທອນເພີ່ມເຕີມ.